ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ອັດຕະປື

ເລກທີ.....11......./ຈຂ.ອປ

ອັດຕະປື,ວັນທີ30.ສິງ.ຫາ.2017

**ຄຳສັ່ງແນະນຳ**

**ຂອງທ່ານເຈົ້າແຂວງ**

**ເຖິງ:** ທ່ານ ຫົວໜ້າ ຫົວໜ່ວຍທຸລະກິດ, ຫ້າງຮ້ານ, ໂຮງຈັກ, ໂຮງງານ, ໂຮງງານອ້ອມຂ້າງແຂວງ ທີ່ນັບຖື.

**ເລື່ອງ:** ການລົງສຳພາດ ແລະ ເກັບກຳຂໍ້ມູນກ່ຽວກັບການເຄື່ອນໄຫວຂອງທຸລະກິດໃນປີ 2016, ຊຶ່ງເລີ່ມແຕ່ວັນທີ 28/08/2017 ເຖິງ 30/09/2017.

- ອີງຕາມ: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ ສະບັບເລກທີ 03 /ສພຊ,ລົງວັນທີ 21/10/2003, ໝວດ III ,ມາດຕາ 14 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ,ເຈົ້າຄອງນະຄອນ.
- ອີງຕາມ: ກົດໝາຍວ່າດ້ວຍສະຖິຕິ(ສະບັບປັບປຸງ)ສະບັບເລກທີ 011/ສພຊ, ລົງວັນທີ 11 ພຶດສະພາ 2017.
- ອີງຕາມ: ການແຈ້ງການຂອງສູນສະຖິຕິແຫ່ງຊາດ ສະບັບເລກທີ.1378/ຜທ,ສຖຕ.2, ລົງວັນທີ.10 /08/2017 ກ່ຽວກັບການສຳຫລວດຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ປະປຈຳປີ 2017.
- ອີງຕາມ: ໜັງສືສະເໜີຂອງສູນສະຖິຕິປະຈຳແຂວງອັດຕະປື,ສະບັບເລກທີ.310 /ພຜທ.ສຕຂ, ລົງວັນທີ .23 /08 /2017 ກ່ຽວກັບການອອກໜັງສືແຈ້ງການເຖິງຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ.

ເຈົ້າແຂວງງ ອັດຕະປື ອອກຄຳສັ່ງແນະນຳເຖິງຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ທີ່ຢູ່ຂອບເຂດພາຍໃນແຂວງຊາບ ດັ່ງນີ້: ແຂວງຈະໄດ້ດຳເນີນການສຳຫລວດຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ປະຈຳປີ 2017, ຊຶ່ງມີຈຸດປະສົງ ເພື່ອຕິດຕາມ ປະເມີນການເຄື່ອນໄຫວ ແລະ ການປະກອບສ່ວນຂອງຫົວໜ່ວຍທຸລະກິດ ໃນການຂະຫຍາຍຕົວເສດຖະກິດ ແລະ ຮັບໃຊ້ເຂົ້າໃນການວາງແຜນພັດທະນາເສດຖະກິດຂອງປະເທດ ແລະ ຂອງແຂວງ. ນອກນັ້ນ, ຍັງຈະໄດ້ນຳໃຊ້ເຂົ້າໃນການວາງນະໂຍບາຍ ສົ່ງເສີມຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງຂອງການດຳເນີນທຸລະກິດຢູ່ໃນ ສ ປປ ລາວ ເວົ້າລວມ ເວົ້າສະເພາະແມ່ນຂອງແຂວງຂອງພວກເຮົາ, ສຳລັບເນື້ອໃນຂອງການສຳຫລວດ ແມ່ນນັກເດີນສຳຫລວດຈາກທີມງານ ຂອງສູນສະຖິຕິປະຈຳແຂວງ. ຈະໄດ້ລົງສຳພາດຕົວຈິງຕໍ່ກັບເຈົ້າຂອງວິສາຫະກິດ/ຜູ້ອຳນວຍການ/ຜູ້ຈັດການທຸລະກິດ ແລະ ເກັບກຳຂໍ້ມູນກ່ຽວກັບຜົນການເຄື່ອນໄຫວຂອງທຸລະກິດ ໃນປີ 2016. ສະນັ້ນ, ໃຫ້ຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານ ກະກຽມເອກະສານທີ່ຈຳເປັນ ເພື່ອສະໜອງຂໍ້ມູນໃຫ້ແກ່ທີມງານສຳຫລວດ ເຊັ່ນ: 1). ໃບທະບຽນວິສາຫະກິດ; 2). ໃບທະບຽນ ອາກອນ ແລະ 3). ບົດສະຫລຸບບັນຊີວິສາຫະກິດ ປີ 2016 (ໃບດຸ່ນດ່ຽງບັນຊີປະເພດ 2, ບັນຊີປະເພດ 3, ບັນຊີປະເພດ6, ບັນຊີປະເພດ7).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຄຳສັ່ງແນະນຳສະບັບນີ້ດ້ວຍ.

ເຈົ້າແຂວງ

ແຂວງອັດຕະປື

ເຈົ້າແຂວງແຂວງອັດຕະປື

ປອ ນາມ ວິຍະເກດ